

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ, ພາກພື້ນ ແລະ ສາກົນ.......................... ໜ້າ 01 - 07

II. ການເຄື່ອນໄຫວຂອງຄະນະນໍາ ຄະນະພົວພັນຕ່າງປະເທດສູນກາງພັກ....................... ໜ້າ 08 - 12

III. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ.......................................... ໜ້າ 13-15


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ປະຈຳເດືອນ **ມີນາ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

**1. ສະພາບການພົ້ນເດັ່ນຢູ່ ສປປ ລາວ**

**1) ສະຖານະການໂຄວິດ-19**

ໃນເດືອນ ມີນາ 2022, ເຊື້ອພະຍາດໂຄວິດ-19 ສາຍພັນ Omicron ໄດ້ແຜ່ຂະຫຍາຍເປັນວົງກວ້າງໃນ ສປປ ລາວ, ເຮັດໃຫ້ມີຜູ້ຕິດເຊື້ອພະຍາດດັ່ງກ່າວເພີ່ມຂຶ້ນເປັນຈຳນວນຫຼວງຫຼາຍ. ຮອດວັນທີ 24 ມີນາ 2022 ມີຜູ້ຕິດເຊື້ອທັງໝົດ 161,866 ເພີ່ມຂຶ້ນ 19,123 ຄົນ ທຽບໃສ່ເດືອນຜ່ານມາ; ປິ່ນປົວຫາຍດີ 157,159 ຄົນ; ກຳລັງປິ່ນປົວຢູ່ໂຮງໝໍ 4,707 ຄົນ; ເສຍຊີວິດສະສົມທັງໝົດ 652 ຄົນ, ເພີ່ມຂຶ້ນ 31 ຄົນ. ເພື່ອປະຕິບັດມາດຕະການປ້ອງກັນ ແລະ ຕ້ານພະຍາດດັ່ງກ່າວ ບໍ່ໃຫ້ທະວີຂຶ້ນໄປທົ່ວປະເທດ, ລັດຖະບານ ໄດ້ອອກແຈ້ງການ ບໍ່ອະນຸຍາດໃຫ້ປະຊາຊົນລາວຈັດສະເຫຼີມສະຫຼອງບຸນປີໃໝ່ລາວ ທີ່ໃກ້ຈະມາເຖິງນີ້ ແລະ ໄດ້ຊຸກຍູ້ໃຫ້ປະຊາຊົນລາວ ສືບຕໍ່ສັກວັກແຊງ ເພື່ອປ້ອງກັນການຕິດເຊື້ອພະຍາດ covid-19. ຮອດວັນທີ 24 ມີນາ 2022, ຜູ້ທີ່ໄດ້ສັກວັກແຊງຄົບ 2 ເຂັມ ມີ 4,431,776 (60.40 %), ໄດ້ສັກເຂັມທີໜຶ່ງ 5,556,272 ຄົນ (75.72 %).

**2). ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນມີນາ 2022**

ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນມີນາ 2022 ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 21 ມີນາ 2022 ທີ່ສຳນັກງານນາຍົກລັດຖະມົນຕີ, ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ, ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ ແລະ ແຂກຖືກເຊີນເຂົ້າຮ່ວມ. ກອງປະຊຸມ ໄດ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດບັນດາວຽກງານລວມ ແລະ ສະເພາະ ຂອງທຸກຂະແໜງການແຕ່ສູນກາງຮອດທ້ອງຖິ່ນໃນເດືອນຜ່ານມາ ເປັນຕົ້ນ ການປະຕິບັດ 2 ວາລະແຫ່ງຊາດ (ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ); ປຶກສາຫາລື ແລະ ສະເໜີທິດທາງແຜນການໃນເດືອນເມສາ 2022, ໃຫ້ສືບຕໍ່ບັນດາວຽກຈຸດສຸມການພັດທະນາເສດຖະກິດ-ສັງຄົມ, ການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດ ຂອງ ພະຍາດ covid-19, ການຖີບຕົວ ຂອງ ລາຄາສິນຄ້າ ແລະ ອື່ນໆ. ພ້ອມກັນນັ້ນ, ໄດ້ພິຈາລະນາກົດໝາຍຈຳນວນໜຶ່ງ ແລະ ໃຫ້ພາກສ່ວນກ່ຽວຂ້ອງ ນຳໄປປັບປຸງໃຫ້ສອດຄ່ອງກັບສະພາບການບໍລິຫານ ແລະ ການພັດທະນາ ຂອງ ປະເທດຊາດໃນປະຈຸບັນ ແລະ ໃນຕໍ່ໜ້າ.

**2. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ວັນທີ 10/3/2022, ສະຫາຍ ຫງວຽນຝູ້ຈ້ອງ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ໄດ້ເປັນປະທານກອງປະຊຸມບັນດາການນຳຫຼັກແຫຼ່ງ ເພື່ອຕີລາຄາບັນຫາທີ່ພົ້ນເດັ່ນຂອງຊາດ, ສະພາບການສາກົນ ໃນໄລຍະ 2 ເດືອນຕົ້ນປີ 2022 ແລະ ຈຸດສຸມໃນຕໍ່ໜ້າ, ເຊິ່ງມີບັນດາສະຫາຍການນຳຂັ້ນສູງຂອງ ພັກ - ລັດ ຫວຽດນາມ ເຂົ້າຮ່ວມ. ໃນກອງປະຊຸມ ໄດ້ເຜີຍແຜ່ເຊື່ອມຊຶມຄຳສັ່ງຂອງ ຄະນະເລຂາທິການສູນກາງພັກ ແລະ ຄຳສັ່ງຂອງ ນາຍົກລັດຖະມົນຕີ ກ່ຽວກັບການຊີ້ນຳ-ນຳພາການສະເຫຼີມສະຫຼອງບຸນປະເພນີຫວຽດນາມ ຢູ່ແຕ່ລະທ້ອງຖິ່ນຕາມມາດຕະການເງື່ອນໄຂ, ຂໍ້ກຳນົດການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ຄຽງຄູ່ກັບການຍູ້ແຮງການຜະລິດ, ດຳເນີນທຸລະກິດເພື່ອພັດທະນາເສດຖະກິດ-ສັງຄົມ, ຮັບປະກັນດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພ້ອມດຽວກັບການສະເຫຼີມສະຫຼອງວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 92 ປີ; ປຶກສາຫາລື ໃນການຟື້ນຟູເສດຖະກິດ-ສັງຄົມພາຍຫຼັງຜົນກະທົບຈາກໂຄວິດ-19 ແລະ ເອົາໃຈໃສ່ໃນການແກ້ໄຂຂໍ້ຄົງຄ້າງ ໃນບາງໂຄງການທີ່ຢຸດສະງັກ. ສຳລັບສະພາບການຄວາມເຄັ່ງຕຶງຢູ່ ອູແກຣນ, ການນຳຂັ້ນສູງໄດ້ຊີ້ນຳຢ່າງທັນການ ໃຫ້ເອົາໃຈໃສ່ ປົກປ້ອງປະຊາຊົນຫວຽດນາມທີ່ດຳລົງຊີວິດ ຢູ່ ອູແກຣນ ໃຫ້ປອດໄພ, ຊຶ່ງນາຍົກລັດຖະມົນຕີ ໄດ້ແຕ່ງຕັ້ງໜ່ວຍງານສະເພາະກິດແກ້ໄຂ

ບັນຫາດັ່ງກ່າວ ໂດຍເປີດຖ້ຽວບິນທຳອິດ ເພື່ອອົບພະຍົບປະຊາຊົນຫວຽດນາມໃຫ້ທັນການ. ສະຫາຍ ຫງວຽນຟູຈ້ອງ ໄດ້ເນັ້ນໜັກເຖິງຜົນສຳເລັດຈາກການເອົາໃຈໃສ່ໃນການຊີ້ນຳ-ນຳພາ ໃນແຕ່ລະຂົງເຂດ ເຊັ່ນ: ການພັດທະນາເສດຖະກິດ-ສັງຄົມ, ການສະກັດກັ້ນການແຜ່ລະບາດໂຄວິດ-19, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ, ວຽກງານກໍ່ສ້າງພັກ, ປັບປຸງປົວແປງພັກ ແລະ ລະບົບການເມືອງ ຄຽງຄູ່ກັບການຕ້ານການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ.

2). **ພັກກອມມູນິດຈີນ**

ກອງປະຊຸມສະພາປຶກສາການເມືອງທົ່ວປະເທດຈີນ ຄັ້ງທີ 5 ສະໄໝທີ 13 ໄດ້ໄຂຂຶ້ນແຕ່ວັນທີ 4-10 ມີນາ 2022 ທີ່ ຫໍປະຊຸມສະພາປະຊາຊົນ, ໂດຍມີສະມາຊິກຜູ້ແທນຂອງສະພາເຂົ້າຮ່ວມຈຳນວນ 1,988 ສະຫາຍ, ຈາກທັງໝົດ 2,157 ສະຫາຍ. ກອງປະຊຸມ ໄດ້ຜ່ານ ແລະ ຮັບຮອງເອກະສານສຳຄັນຈຳນວນໜຶ່ງ ເປັນຕົ້ນ ບົດລາຍງານການເມືອງກ່ຽວກັບການປະຕິບັດວຽກງານຂອງຄະນະປະຈຳຂອງສະພາປຶກສາການເມືອງທົ່ວປະເທດຈີນ ສະໄໝທີ 13 ປະຈຳປີ 2021; ບົດລາຍງານການປະຕິບັດວຽກງານຂອງສະພາປຶກສາຫາລືທົ່ວປະເທດຈີນ ປະຈຳປີ 2021 ແລະ ມະຕິຂອງກອງປະຊຸມສະພາປຶກສາການເມືອງທົ່ວປະເທດຈີນ ຄັ້ງທີ 5 ສະໄໝທີ 13. ພ້ອມນັ້ນ, ກອງປະຊຸມ ໄດ້ອອກມະຕິ ໂດຍກຳນົດເປົ້າໝາຍ 3 ດ້ານ ຄື: ① ກະກຽມຄວາມພ້ອມປະກອບສ່ວນເຂົ້າໃນການກະກຽມກອງປະຊຸມໃຫຍ່ ຄັ້ງທີ 20 ຂອງພັກກອມມູນິດຈີນ ແລະ ຄວາມພ້ອມໃນການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ 20 ຂອງພັກກອມມູນິດຈີນ; ② ເຮັດລ້ອນໜ້າທີ່ຂອງສະພາປຶກສາການເມືອງທົ່ວປະເທດຈີນ ສະໄໝທີ 13 ເພື່ອສ້າງສະພາບເງື່ອນໄຂອັນດີແກ່ກອງປະຊຸມ ຄັ້ງທີ 1 ຂອງສະພາປຶກສາການເມືອງທົ່ວປະເທດຈີນ ສະໄໝທີ 14 ໃນຕົ້ນປີ 2023; ③ ເສີມຂະຫຍາຍບົດບາດ, ສິດ ແລະ ໜ້າທີ ຂອງສະພາປຶກສາການເມືອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍຖືເອົາປະຊາຊົນເປັນຫຼັກ, ຮັບໃຊ້ປະຊາຊົນເປັນໜ້າທີ່ການເມືອງອັນຕົ້ນຕໍ; ສົ່ງເສີມລະບອບປະຊາທິປະໄຕທີ່ມີພັກກອມມູນິດຈີນເປັນຜູ້ນຳພາ ເພື່ອຮ່ວມກັບບັນດາຂະບວນປະຊາທິປະໄຕຕ່າງໆ ໃນຂະບວນສ້າງລະບອບປະຊາທິປະໄຕ ຕາມສີສັນຂອງສັງຄົມນິຍົມແບບຈີນ ໃຫ້ມີຄວາມສົມບູນຍິ່ງຂຶ້ນ; ຍຶດໝັ້ນຫຼັກການ, ແນວຄິດການເມືອງ ແລະ ຍົກສູງສະຕິທາງການເມືອງ; ລົງເລິກການຮໍ່າຮຽນ ແລະ ຮູ້ໝູນໃຊ້ຜັນຂະຫຍາຍບັນດາມະຕິຄຳສັ່ງຂອງສູນກາງພັກກອມມູນິດຈີນ ທີ່ມີສະຫາຍ ສີຈິ້ນຜິງ ເປັນແກ່ນສານນຳພາ ເພື່ອເຕົ້າໂຮມຄວາມສາມັກຄີ ແລະ ເຕົ້າໂຮມຄວາມຄິດເຫັນຕ່າງໆ; ຕັ້ງໜ້າໂຄສະນາ ແລະ ເຜີຍແຜ່ທ່າແຮງ ກໍຄືຜົນສຳເລັດຂອງຂະບວນການສ້າງລະບອບປະຊາທິປະໄຕ ຕາມສັງຄົມນິຍົມທີ່ມີສີສັນແບບຈີນ.

ໃນກອງປະຊຸມ, ທ່ານ ຫຼີ ເຄີ້ສຽງ, ນາຍົກລັດຖະມົນຕີແຫ່ງ ສປ ຈີນ ໄດ້ລາຍງານວຽກງານຂອງລັດຖະບານ ໂດຍໄດ້ສັງລວມບັນຈຸດສຳຄັນ ເຊັ່ນ: ລວມຍອດຜະລິດຕະພັນພາຍໃນ ຫຼື GDP ຂອງຈີນໃນປີ 2021 ໄດ້ບັນລຸເຖິງ 114.000 ຕື້ຢວນ, ເພີ່ມຂຶ້ນ 8,1% ເມື່ອທຽບໃສ່ປີ 2020; ລາຍຮັບການເງິນທົ່ວປະເທດໄດ້ບັນລຸຫຼາຍກວ່າ 20.000 ຕື້ຢວນ (ເພີ່ມຂຶ້ນ 10,7%); ສ້າງວຽກເຮັດງານທຳໃນຕົວເມືອງໄດ້ 12,69 ລ້ານຄົນ ແລະ ອັດຕາຫວ່າງງານສະເລ່ຍໃນຕົວເມືອງແມ່ນ 5,1%; ລາຄາເຄື່ອງອຸປະໂພກບໍລິໂພກເພີ່ມຂຶ້ນ 0,9%, ລາຍຮັບ ແລະ ລາຍຈ່າຍກັບສາກົນສາມາດຮັກສາຄວາມດຸນດ່ຽງໄດ້ໂດຍພື້ນຖານ. ທິດທາງ ປີ 2022, ໄດ້ກຳນົດການເຕີບໂຕຂອງເສດຖະກິດ ໃຫ້ຢູ່ໃນລະດັບ 5,5%; ເປົ້າໝາຍຕົ້ນຕໍໃນດ້ານການພັດທະນາໃນໄລຍະຕໍ່ໄປ "ການເພີ່ມໂອກາດການມີວຽກເຮັດງານທຳຢູ່ຕົວເມືອງໃຫ້ໄດ້ຫຼາຍກວ່າ 11 ລ້ານຕຳແໜ່ງງານ, ອັດຕາຫວ່າງງານຂອງຕົວເມືອງຈະໃຫ້ຢູ່ໃນລະດັບ 5,5%, ລາຄາເຄື່ອງອຸປະໂພກບໍລິໂພກຂອງປະຊາຊົນຈະເພີ່ມຂຶ້ນປະມານ 3%". ພ້ອມດຽວກັນ, ສປ ຈີນ ໃຫ້ຄຳໝັ້ນສັນຍາວ່າ ຈະຍຶດໝັ້ນນະວັດຕະກຳການເປັນສູນກາງໃນການຊຸກຍູ້ການຫັນເປັນທັນສະໄໝ ເພື່ອເພິ່ງພາຕົນເອງໃນດ້ານວິທະຍາສາດ ແລະ ເຕັກໂນໂລຊີ ພ້ອມທັງຈະຍົກລະດັບການຫຼຸດພາສີໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຈາກ 75% ເປັນ 100 % ແລະ ຫຼຸດພາສີໃຫ້ແກ່ວິສາຫະກິດທີ່ລົງທຶນໃນການວິໄຈຂັ້ນພື້ນຖານ, ຈະດຳເນີນມາດຕະການຕາມຂັ້ນຕອນເພື່ອບັນລຸການຫຼຸດການປ່ອຍອາຍກາກບອນສູງສຸດ ໃນປີ 2030 ແລະ ໃຫ້ປອດອາຍກາກບອນໃນປີ 2060. ສປ ຈີນ ຍັງຈະພະຍາຍາມຊ່ວຍເຫຼືອເຂດປົກຄອງພິເສດຮົງກົງ ແລະ ມາກາວ ໃນການພັດທະນາເສດຖະກິດ,

ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ຊຸກຍູ້ການເຊື່ອມໂຍງທັງສອງເຂດເຂົ້າກັບການພັດທະນາລວມຂອງປະເທດ, ຮັກສາຄວາມຈະເລີນຮຸ່ງເຮືອງ ແລະ ສະຖຽນລະພາບໃນໄລຍະຍາວ ສືບຕໍ່ຍຶດໝັ້ນຫຼັກການໜຶ່ງປະເທດສອງລະບົບ, ຫຼັກການຈີນດຽວ ຊຸກຍູ້ການຂະຫຍາຍຕົວຂອງການພົວພັນຢ່າງສັນຕິໃນຊ່ອງແຄບ ໄຕ້ຫວັນ ແລະ ການທ້ອນໂຮມຊາດ, ຄັດຄ້ານຢ່າງໜັກແໜ້ນຕໍ່ການເຄື່ອນໄຫວການແຍກເປັນເອກະລາດຂອງໄຕ້ຫວັນ ແລະ ຕ້ານການແຊກແຊງຂອງຕ່າງປະເທດ.

**3). ພັກແຮງງານເກົາຫຼີ**

ວັນທີ 27/2-1/3/2022, ກອງປະຊຸມເລຂາທິການສູນກາງພັກແຮງງານເກົາຫຼີ ຄັ້ງທີ 2 ໄດ້ໄຂຂຶ້ນ ໂດຍການເປັນປະທານຂອງ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ຜູ້ນຳສູງສຸດ ສປປ ເກົາຫຼີ; ມີຄະນະເລຂາທິການສູນກາງພັກ, ສະຖາບັນການສຶກສາແຫ່ງຊາດ ແລະ ພາກສ່ວນການນຳໃນຂົງເຂດການລົງທຶນ ແລະ ກະສິກຳ ເຂົ້າຮ່ວມ. ກອງປະຊຸມ ໄດ້ຕີລາຄາທົບທວນຄືນຜົນສຳເລັດ, ປະສົບການ ແລະ ບົດຮຽນດ້ານວຽກງານຂອງອົງການຈັດຕັ້ງພັກ ໃນໄລຍະຜ່ານມາ ແລະ ປຶກສາຫາລືກ່ຽວກັບການພັດທະນາ ແລະ ເສີມຂະຫຍາຍວຽກງານເບື້ອງຕົ້ນຂອງອົງການຈັດຕັ້ງພັກ ໃນການກ້າວເຂົ້າສູ່ຍຸກໃໝ່ແຫ່ງການປະຕິວັດ.

ວັນທີ 15/3/2022, ສະຫາຍ ກິມເຈິງອຸນ ພ້ອມດ້ວຍການນຳຂັ້ນສູງຂອງພັກແຮງງານເກົາຫຼີ ໄດ້ລົງຢ້ຽມຢາມເມືອງຊຳຈີຢອນ (ບ້ານເກີດຂອງ ສະຫາຍ ກິມ ເຈິງອິນ) ໃນໂອກາດສະເຫຼີມສະຫຼອງວັນເກີດ ຂອງ ສະຫາຍ ກິມເຈິງອິນ, ຜູ້ນຳທີ່ຍິ່ງໃຫຍ່ຂອງປະຊາຊົນ ສປປ ເກົາຫຼີ ຄົບຮອບ 80 ປີ ເພື່ອລະນຶກເຖິງຜົນງານອັນສະຫຼາດສ່ອງໃສຂອງ ສະຫາຍ ກິມເຈິງອິນ ກໍ່ຄືນາຍພົນຜູ້ຍິ່ງໃຫຍ່ ທີ່ໄດ້ອຸທິດຕະຫຼອດຊີວິດ ເພື່ອປະເທດຊາດໄລຍະຜ່ານມາ ບົນເສັ້ນທາງການປະຕິວັດອັນສັກສິດແຫ່ງຈຸເຊ ທີ່ເກີດຂຶ້ນຢູ່ພື້ນຖານ ການປະຕິວັດເຂດພູແບກດູ. ສະຫາຍ ກິມເຈິງອຸນ ໄດ້ກ່າວຕໍ່ໜ້າຮູບປັ້ນທອງ ຂອງ ສະຫາຍ ກິມ ເຈິງອິນ ວ່າ: “ຂ້າພະເຈົ້າ ຈະສືບຕໍ່ເສີມຂະຫຍາຍມູນເຊື້ອຂອງການປະຕິວັດຈຸເຊ ທີ່ໄດ້ລິເລີ່ມຈາກພູແບກດູ ໃຫ້ໄດ້ຮັບຜົນສຳເລັດ ເພື່ອໃຫ້ປະຊາຊົນ ສປປ ເກົາຫຼີ ມີຄວາມຜາສຸກ ແລະ ຮັ່ງມີຢູ່ໃນຜືນແຜ່ນດິນແຫ່ງການປະຕິວັດຂອງ ສປປ ເກົາຫຼີ”.

**4). ພັກກອມມູນິດກູບາ**

ວັນທີ 4/3/2022, ກະຊວງການຕ່າງປະເທດ ສ. ກູບາ ໄດ້ຖະແຫຼງກ່ຽວກັບການປະນາມ ອາເມຣິກາ ສືບຕໍ່ຂວ້ຳບາດ ສ. ກູບາ ທ່າມກາງການລະບາດຂອງພະຍາດໂຄວິດ-19 ວ່າ ເປັນການປິດລ້ອມທາງດ້ານເສດຖະກິດກູບາ, ລະເມີດສິດທິມະນຸດຂັ້ນຮຸນແຮງ ເຊິ່ງປະຊາຊົນກູບາຍອມຮັບບໍ່ໄດ້. ທ່ານ Bruno Rodríguez, ລັດຖະມົນຕີຕ່າງປະເທດກູບາ ໄດ້ຢ້ຳວ່າ ອາເມຣິກາ ໄດ້ເພີ່ມທະວີຄວາມພະຍາຍາມຈຳແນກຊ່ອງຫວ່າງທາງດ້ານເສດຖະກິດ ແລະ ເຊື້ອຊາດ ຂອງປະຊາຊົນໃນຂົງເຂດອາເມຣິກາລາຕິນ ແລະ ກາລິບຽນ ດ້ວຍການໃຊ້ນະໂຍບາຍແບ່ງແຍກເດັກນ້ອຍຊາວອົບພະຍົບໃຫ້ພັດພາກຈາກຄອບຄົວ, ເຮັດໃຫ້ເກີດຄວາມສ່ຽງໃນການດຳລົງຊີວິດ, ກຽດສັກສີ, ເສລີພາບ ແລະ ສິດທິດມະນຸດຂອງຜູ້ອົບພະຍົບ. ສ່ວນບັນຫາຄວາມເຄັ່ງຕຶງ ລະຫວ່າງ ອູແກຣນ ແລະ ລັດເຊຍ, ກູບາ ຍຶດໝັ້ນກົດໝາຍມະນຸດສະທຳສາກົນ ແລະ ຮຽກຮ້ອງໃຫ້ທຸກຝ່າຍທີ່ກ່ຽວຂ້ອງ ຈົ່ງປົກປ້ອງປະຊາຊົນ, ຊັບສິນ ແລະ ພື້ນຖານໂຄງລ່າງພົນລະເຮືອນ; ຮຽກຮ້ອງໃຫ້ ອູແກຣນ ແລະ ລັດເຊຍ ປະຕິບັດກົນໄກເຈລະຈາ ເພື່ອແກ້ໄຂຄວາມເຄັ່ງຕຶງທີ່ເກີດຂຶ້ນ. ກູບາສະໜັບສະໜູນຄວາມໝັ້ນຄົງ ແລະ ອະທິປະໄຕຂອງທຸກຝ່າຍ ເພື່ອສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ແລະ ໃນໂລກ.

ວັນທີ 18/3/2022, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ ໄດ້ເຂົ້າຮ່ວມພິທີປິດກອງປະຊຸມສຳມະນາກ່ຽວກັບການຄຸ້ມຄອງລັດຂອງບັນດາການນຳຂັ້ນແຂວງ ແລະ ຂັ້ນເມືອງ ແລະ ມີຄຳເຫັນ ຢືນຢັນຄືນບົດບາດຄວາມສຳຄັນຂອງການນຳທ້ອງຖິ່ນ ຊຶ່ງເປັນອົງປະກອບທີ່ສຳຄັນໃຫ້ແກ່ການພັດທະນາປະເທດ ທັງມີຄວາມສຳຄັນຂອງການວາງແຜນຍຸດທະສາດ ແລະ ການເຊື່ອມໂຍງກັບປະຊາຊົນຢ່າງສະໝໍ່າສະເໝີ ແລະ ຕໍ່ເນື່ອງ ເພື່ອກຳນົດວິທີແກ້ໄຂບັນຫາຕ່າງໆ. ການນຳຂັ້ນທ້ອງຖິ່ນ ຕ້ອງໄດ້ເອົາໃຈໃສ່ໃນການຕິດຕາມກວດກາບັນດາອົງການທີ່ຍັງບໍ່ສາມາດບັນລຸລະດັບຄາດໝາຍໄດ້ຢ່າງມີປະສິດທິຜົນຕາມຂໍ້ກຳນົດທີ່

ວາງໄວ້ ແລະ ໃຊ້ທຸກຄວາມພະຍາຍາມ ເພື່ອຟື້ນຟູເສດຖະກິດໃນທຸກຂົງເຂດ, ການປະຕິຮູບແບບແຜນວິທີເຮັດວຽກອີງໃສ່ສະພາບການໃນປັດຈຸບັນ ໂດຍຜ່ານການແລກປ່ຽນ, ການປຶກສາຫາລື, ສົ່ງເສີມການປ່ຽນແປງໃໝ່ຢ່າງມີຫົວຄິດປະດິດສ້າງ ແລະ ມີສ່ວນຮ່ວມໃນການຄຸ້ມຄອງໃຫ້ຫຼາຍຂຶ້ນ ແລະ ຮຽກຮ້ອງໃຫ້ມີຄວາມຕັ້ງໜ້າໃນການຈັດຕັ້ງປະຕິບັດບັນດາເອກະສານທີ່ລັດຖະບານໄດ້ວາງອອກ ເພື່ອຊຸກຍູ້ການຜະລິດໃນຂະແໜງກະສິກໍາ ແລະ ສົ່ງເສີມການສົ່ງອອກໃຫ້ຫຼາຍຂຶ້ນ.

**5). ສ. ເກົາຫຼີ**

ວັນທີ 9/3/2022, ສາທາລະນະລັດເກົາຫຼີ ໄດ້ດຳເນີນການເລືອກຕັ້ງປະທານາທິບໍດີ, ເຊິ່ງ ຜົນການການເລືອກຕັ້ງ, ທ່ານYoon Suk yeol, ອະດີດໄອຍະການສູງສຸດ ຈາກພັກພະລັງປະຊາຊົນ (People Power Party – PPP) ເປັນພັກຝ່າຍຄ້ານ ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 48,56%; ສ່ວນ ທ່ານ Lee Jae myung ຕົວແທນຈາກພັກກຳອຳນາດ ພັກປະຊາທິປະໄຕເກົາຫຼີ (Democratic Party of Korea - DP) ໄດ້ຄະແນນສຽງ 47,83%. ພາຍຫຼັງໄດ້ຮັບໄຊຊະນະ, ທ່ານ Yoon Suk yeol ໄດ້ຖະແຫຼງວ່າ ຈະເຕົ້າໂຮມຄວາມສາມັກຄີພາຍໃນຊາດ.

**3. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ**

ພະຍາດ COVID-19 ສາຍພັນ Omicron ຍັງສືບຕໍ່ລະບາດເປັນວົງກ້ວາງ ໃນທົ່ວໂລກ. ຮອດວັນທີ 31 ມີນາ 2022, ມີພົນລະເມືອງທົ່ວໂລກຕິດເຊື້ອ COVID-19 ສະສົມເຖິງ 486.628.170 ກໍລະນີ, ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1.800.770 ກໍລະນີ, ເສຍຊີວິດ 6.160.599 ຄົນ, ເພີ່ມຂຶ້ນ 193.614 ຄົນ, ປິ່ນປົວຫາຍດີ 421.637.312 ຄົນ, ເພີ່ມຂຶ້ນ 2.967.821 ຄົນ ທຽບໃສ່ຜ່ານມາ. ປະເທດທີ່ມີຜູ້ຕິດເຊື້ອ 3 ອັນດັບຕົ້ນ ມີ: ອາເມລິກາ 81,686,625 ກໍລະນີ, ເສຍຊີວິດ 1,005,055 ຄົນ; ອິນເດຍ 43,023,010 ກໍລະນີ, ເສຍຊີວິດ 521,131 ຄົນ; ບຣາຊິນ 29,882,397 ກໍລະນີ, ເສຍຊີວິດ 659,294 ຄົນ. ສ່ວນໃນປະເທດສະມາຊິກ ອາຊຽນ, ຫວຽດນາມ ມີຜູ້ຕິດເຊື້ອ 9,386,489 ກໍລະນີ, ເສຍຊີວິດ 42,413 ຄົນ; ອິນໂດເນເຊຍ 6,005,646 ກໍລະນີ, ເສຍຊີວິດ 154,882 ຄົນ; ມາເລເຊຍ 4,167,418 ກໍລະນີ, ເສຍຊີວິດ 34,906 ຄົນ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ວັນທີ 18/3/2022, ທ່ານ ສີ ຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ ແລະ ທ່ານ ໂຈ ໄບເດັນ, ປະທານາທິບໍດີ ສ.ອາເມຣິກາ ໄດ້ສົນທະນາຜ່ານວິດີໂອທາງໄກ ເພື່ອປຶກສາຫາລືການພົວພັນລະຫວ່າງ ສປ ຈີນ - ສ.ອາເມຣິກາ, ແລກປ່ຽນທັດສະນະກ່ຽວກັບການແກ້ໄຂບັນຫາພາກພື້ນ ແລະ ສາກົນ ທີ່ພວມເຄັ່ງຮ້ອນຢູ່ໃນປັດຈຸບັນ ເປັນຕົ້ນບັນຫາໃນ ອູແກຣນ, ເຊິ່ງທ່ານ ສີ ຈິ້ນຜິງ ໄດ້ມີຄຳເຫັນວ່າ: ເພື່ອຄວາມສະຫງົບ ໃນຂົງເຂດເອີຣົບຕາເວັນອອກ, ອາເມລິກາ, ກຸ່ມ ນາໂຕ ແລະ ພັນທະມິດອື່ນໆ ຄວນຫັນໜ້າຮ່ວມມືເຈລະຈາ ກັບ ລັດເຊຍ ແລະ ສະໜັບສະໜູນການເຈລະຈາ ລະຫວ່າງ ລັດເຊຍ - ອູແກຣນ ໄປໃນທາງສ້າງສັນ ເພື່ອຢຸດຕິຄວາມເຄັ່ງຕຶງ ແລະ ຊ່ວຍເຫຼືອດ້ານມະນຸດສະທຳແກ່ປະຊາຊົນຜູ້ໄດ້ຮັບຜົນກະທົບ; ສປ ຈີນ ບໍ່ສະໜັບສະໜູນການໃຊ້ມາດຕະການຝ່າຍດຽວ, ການໃຊ້ມາດຕະການລົງໂທດຕໍ່ຝ່າຍໜຶ່ງ ຈະມີຜົນຕອບກັບໃຫ້ທຸກຝ່າຍໄດ້ຮັບຜົນກະທົບໃນທາງບວກ ແລະ ທາງລົບຢ່າງເທົ່າທຽມ; ຮຽກຮ້ອງໃຫ້ ອາເມຣິກາ ຢຸດຕິສະໜັບສະໜູນ ໄຕຫວັນ, ໃຫ້ເຄົາລົບໃນຫຼັກການຈີນດຽວ ແລະ ໃຫ້ຮັບຮູ້ເຖິງການພົບປະ ຂອງ ສອງຜູ້ນຳ ສປ ຈີນ ແລະ ສ.ອາເມຣິກາ ໃນເດືອນ ພະຈິກ 2021 ຜ່ານມາ. ສ່ວນ ທ່ານ ໂຈ ໄບເດັນ ໄດ້ກ່າວວ່າ ການພົວພັນລະຫວ່າງ ສ.ອາເມລິກາ - ສປ ຈີນ ໄດ້ກາຍເປັນຈຸດວິກິດການອີກເທື່ອໜຶ່ງ, ແຕ່ ອາເມລິກາ ຈະບໍ່ສະແຫວງຫາການຕໍ່ສູ້ "ສົງຄາມເຢັນຄັ້ງໃໝ່" ກັບ ສປ ຈີນ, ບໍ່ສະແຫວງຫາການຕໍ່ຕ້ານ ແລະ ການປ່ຽນແປງລະບອບຂອງ ສປ ຈີນ ດ້ວຍການເສີມຂະຫຍາຍພັນທະມິດ; ບໍ່ສະໜັບສະໜູນ ໄຕຫວັນ ເປັນເອກະລາດ. ສ.ອາເມລິກາ ຍິນດີ

ປຶກສາຫາລືກັບ ສປ ຈີນ ເພື່ອການຮ່ວມມື, ຍຶດໝັ້ນນະໂຍບາຍຈີນດຽວ, ຊຸກຍູ້ການພັດທະນາການພົວພັນລະຫວ່າງ ສ.ອາເມລິກາ ກັບ ສປ ຈີນ. ການພົບປະຜ່ານທາງໄກຄັ້ງນີ້, ຜູ້ນຳ ສປ ຈີນ ແລະ ສ.ອາເມລິກາ ໄດ້ໃຫ້ທັດສະນະຢ່າງກົງໄປກົງມາ, ສືບຕໍ່ຊຸກຍູ້ປຶກສາຫາລືແກ້ໄຂບັນຫາເສດຖະກິດ-ການຄ້າ, ການລົງທຶນ ແລະ ອື່ນໆ; ສປ ຈີນ ແລະ ສ.ອາເມລິກາ ລ້ວນແຕ່ເປັນສະມາຊິກຖາວອນ ຂອງ ສະພາຄວາມໝັ້ນຄົງ ສະຫະປະຊາຊາດ, ສອງຝ່າຍຄວນຮ່ວມມືສະໜັບສະໜູນ ແລະ ແກ້ໄຂບັນຫາ ຂອງໂລກ ໃຫ້ເປັນທີ່ຍອມຮັບ ຂອງ ທຸກຝ່າຍ.

ວັນທີ 18/3/2022, ທ່ານ ຮຸນເຊັນ, ນາຍົກລັດຖະມົນຕີກຳປູເຈຍ ໄດ້ສົນທະນາທາງໂທລະສັບກັບ ທ່ານ ສີຈິ້ນຜິງ, ປະທານປະເທດຈີນ. ທ່ານ ຮຸນເຊັນ ກ່າວວ່າ: ການຄ້າລະຫວ່າງ ກຳປູເຈຍ-ຈີນ ໄດ້ຂະຫຍາຍຕົວຢ່າງວ່ອງໄວ, ການກໍ່ສ້າງໂຄງການໃຫຍ່ ພາຍໃຕ້ຂອບການຮ່ວມມື "ໜຶ່ງແລວໜຶ່ງເສັ້ນທາງ" ມີຄວາມຄືບໜ້າດີ ຈາກຜົນສຳເລັດຂອງສາຍພົວພັນຄູ່ຮ່ວມຍຸດທະສາດຮອບດ້ານກຳປູເຈຍ-ຈີນ ແລະ ການສ້າງຄູ່ຮ່ວມຊະຕາກຳ ກຳປູເຈຍ-ຈີນ. ໃນໂອກາດວັນສ້າງຕັ້ງສາຍພົວພັນການທູດລະຫວ່າງສອງປະເທດ ຄົບຮອບ 65 ປີ ໃນປີ 2023, ຈະເປັນບັນຍາກາດດີໃຫ້ສອງຝ່າຍ ໄດ້ລົງເລິກແລກປ່ຽນການຮ່ວມມືໃນຂົງເຂດຕ່າງໆເຊັ່ນ: ເສດຖະກິດການຄ້າ, ກະສິກຳ, ວັດທະນະທຳ ແລະ ອື່ນໆ, ຊຸກຍູ້ການຮ່ວມກັນສ້າງ "ໜຶ່ງແລວໜຶ່ງເສັ້ນທາງ", ຍົກລະດັບສາຍພົວພັນຄູ່ຮ່ວມຍຸດທະສາດຮອບດ້ານ ກຳປູເຈຍ ແລະ ສປ ຈີນ ໃຫ້ຂຶ້ນສູ່ລະດັບໃໝ່. ໃນຖານະເປັນປະເທດປະທານໝູນວຽນ ຂອງ ອາຊຽນປີ 2022, ກຳປູເຈຍ ຍິນດີສືບຕໍ່ຕັ້ງໜ້າຊຸກຍູ້ອາຊຽນເສີມຂະຫຍາຍການພົວພັນກັບຈີນ. ສ່ວນ ທ່ານ ສີຈິ້ນຜິງ ໄດ້ກ່າວວ່າ: ຈີນ ຈະສືບຕໍ່ສະໜັບສະໜູນກຳປູເຈຍໃນການຕ້ານກັບພະຍາດໂຄວິດ-19, ແລກປ່ຽນດ້ານວັດທະນະທຳລະຫວ່າງສອງປະເທດ. ສປ ຈີນ ເດັດດ່ຽວສະໜັບສະໜູນຄວາມເປັນກາງຂອງອາຊຽນ, ສະໜັບສະໜູນອາຊຽນເສີມຂະຫຍາຍບົດບາດຫຼາຍກວ່າເກົ່າໃນວຽກງານພາກພື້ນ ແລະ ສາກົນ, ສະໜັບສະໜູນກຳປູເຈຍປະຕິບັດໜ້າທີ່ເປັນປະທານໝູນວຽນຂອງອາຊຽນ ປະຈຳປີ 2022 ໃຫ້ໄດ້ຮັບປະສິດທິຜົນ, ສປ ຈີນ ຍິນດີຮ່ວມກັບກຳປູເຈຍ ແລະ ບັນດາປະເທດສະມາຊິກອາຊຽນຊຸກຍູ້ສາຍພົວພັນຄູ່ຮ່ວມຍຸດທະສາດຮອບດ້ານຈີນ-ອາຊຽນ ໃຫ້ໄດ້ຮັບການພັດທະນາໃໝ່ຢ່າງບໍ່ຢຸດຢັ້ງ.

ວັນທີ 19/3/2022, ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ຢ້ຽມຢາມ ອິນເດຍ, ພົບປະກັບທ່ານ Narendra Modi, ນາຍົກລັດຖະມົນຕີອິນເດຍ ແລະ ໄດ້ປະກາດຈະເພີ່ມການລົງທຶນໃນອິນເດຍ ຈຳນວນ 42 ຕື້ໂດລາສະຫະລັດ ໃນ 5 ປີຕໍ່ໜ້າ; ສອງຝ່າຍເຫັນດີຈະຮ່ວມມືດ້ານເສດຖະກິດ, ພະລັງງານ ແລະ ຂະແໜງການອື່ນໆ. ພ້ອມກັນນັ້ນ, ໄດ້ປຶກສາຫາລືໃນບັນຫາພາກພື້ນ ແລະ ສາກົນ, ໂດຍສະເພາະບັນຫາຄວາມເຄັ່ງຕຶງ ຢູ່ອູແກຣນ, ເຊິ່ງອິນເດຍ ສະໜັບສະໜູນທາງການທູດໃຫ້ບັນດາຝ່າຍກ່ຽວຂ້ອງ ປຶກສາຫາລືແກ້ໄຂບັນຫາທີ່ເກີດຂຶ້ນ ເພື່ອຄວາມສະຫງົບໃນຂົງເຂດພາກພື້ນດັ່ງກ່າວ.

ພາຍຫຼັງການຢ້ຽມຢາມ ອິນເດຍ, ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ຢ້ຽມຢາມ ກຳປູເຈຍໃນວັນທີ 20/3/2022, ພົບປະກັບ ທ່ານ ຮຸນເຊັນ, ນາຍົກລັດຖະມົນຕີກຳປູເຈຍ ເພື່ອເສີມຂະຫຍາຍ-ຮັດແໜ້ນການພົວພັນຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ, ໄລຍະຜ່ານມາ ຍີ່ປຸ່ນ ໄດ້ຊ່ວຍເຫຼືອ ກຳປູເຈຍ ໃນຫຼາຍດ້ານ ເປັນຕົ້ນ ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ, ການພັດທະນາຊັບພະຍາກອນມະນຸດ, ການສະໜອງເງິນກູ້ຢືມ, ການປ້ອງກັນ ແລະ ຕ້ານການແຜ່ລະບາດ ຂອງ ພະຍາດໂຄວິດ-19, ການພັດທະນາທ່າເຮືອ Sihanouville, ເປັນທ່າເຮືອສຳຄັນໃນການພັດທະນາເສດຖະກິດ ແລະ ການລົງທຶນ ຂອງ ປູເຈຍ. ນອກນີ້, ສອງຝ່າຍໄດ້ແລກປ່ຽນກ່ຽວກັບຄວາມເຄັ່ງຕຶງ ຢູ່ອູແກຣນ ໂດຍໃຫ້ທັດສະນະລວມວ່າ: ບັນດາຝ່າຍກ່ຽວຂ້ອງລ້ວນແຕ່ເປັນສະມາຊິກ ຂອງ ອົງການສະຫະປະຊາຊາດ, ໃຫ້ເຄົາລົບກົດໝາຍສາກົນ ເພື່ອມະນຸດສະທຳຕໍ່ປະຊາຊົນຜູ້ໄດ້ຮັບຜົນກະທົບ ແລະ ໃຫ້ມີຄວາມສະຫງົບໃນພາກພື້ນ ແລະ ສາກົນ.

**3). ສະພາບການ ໃນຂົງເຂດເອີລົບ-ອາເມຣິກາ**

ການປະຕິບັດການພິເສດທາງການທະຫານຂອງລັດເຊຍ ຢູ່ອູແກຣນ ຍັງສືບຕໍ່ດຳເນີນ ໄປພ້ອມກັບການພະຍາຍາເຈລະຈາ ເພື່ອຫາຂໍ້ຢຸດຕິຄວາມຂັດແຍ່ງຮ່ວມກັນ ຈຳນວນ 05 ຄັ້ງ, ເຊິ່ງຂໍ້ສະເໜີຂອງລັດເຊຍຕໍ່ອູແກຣນ ມີ 5

ຂໍ້ຫຼັກ ຄື : 1. ໃຫ້ອູແກຣນ ຍອມປົດອາວຸດ, 2. ປັບປຸງລັດຖະທຳມະນູນ ໂດຍລະບຸບໍ່ໃຫ້ອູແກຣນເຂົ້າເປັນສະມາຊິກ ນາໂຕ, 3. ຮັບຮູ້ສອງລັດເອກະລາດ ສາທາລະນະລັດປະຊາຊົນ Donetsk ແລະ Lugansk, 4. ຮັບຮູ້ Crimea ເປັນດິນແດນລັດເຊຍ. ໃນການເຈລະຈາ 5 ຄັ້ງຜ່ານມາ, ສອງຝ່າຍ ສາມາດຕົກລົງກັນເລື່ອງການໃຫ້ຄວາມຊ່ວຍເຫຼືອດ້ານມະນຸດສະທຳແກ່ປະຊາຊົນອູແກຣນ ແລະ ອູແກຣນ ໄດ້ຕົກລົງ ຈະບໍ່ເຂົ້າຮ່ວມເປັນສະມາຊິກ NATO, ສ່ວນຂໍ້ສະເໜີອີກ 3 ຂໍ້ ຍັງບໍ່ໄດ້ຮັບການຕອບຮັບຈາກອູແກຣນ, ເຊິ່ງອູແກຣນ ຮຽກຮ້ອງໃຫ້ລັດເຊຍ ຖອນກຳລັງທະຫານຂອງຕົນອອກຈາກອູແກຣນ ແລະ ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ. ສ່ວນ ລັດເຊຍ ໄດ້ຢືນຢັນຕະຫຼອດມາວ່າ ຕົນ ບໍ່ມີເປົ້າໝາຍເພື່ອຍຶດຄອງອູແກຣນ ແລະ ບໍ່ມີຈຸດປະສົງໂຈມຕີພົນລະເຮືອນແຕ່ຢ່າງໃດ, ຕ້ອງການໃຫ້ອູແກຣນ ຍອມຈຳນົນ ແລະ ມີຄວາມເປັນກາງ; ລັດເຊຍ ຈະສືບຕໍ່ດຳເນີນການປະຕິບັດການພິເສດທາງການທະຫານ ຢູ່ ອູແກຼນ ຈົນກວ່າຈຸດປະສົງດັ່ງກ່າວຂອງຕົນບັນລຸຜົນ. ໃນຂະນະທີ່ ປະທານາທິບໍດີອູແກຣນ ຍັງສືບຕໍ່ຮຽກຮ້ອງໃຫ້ NATO ແລະ ບັນດາປະເທດພັນທະມິດ ຂອງ ຕົນ ສົ່ງກຳລັງທະຫານ ແລະ ອາວຸດຊ່ວຍ ອູແກຣນ ເພື່ອຕ້ານກັບລັດເຊຍ ແລະ ຮຽກຮ້ອງໃຫ້ປະຊາຊົນເອີຣົບເດີນຂະບວນປະທ້ວງຕໍ່ຕ້ານລັດເຊຍ.

ໃນຄວາມເຄັ່ງຕຶງລະຫວ່າງອູແກຣນ ກັບ ລັດເຊຍ ໄດ້ມີຫຼາຍປະເທດໃຫ້ທັດສະນະ ເປັນຕົ້ນ ສປ ຈີນ ໄດ້ຮຽກຮ້ອງໃຫ້ທຸກຝ່າຍທີ່ກ່ຽວຂ້ອງ ໃຊ້ຊ່ອງທາງການທູດເຈລະຈາ ເພື່ອທຸກຝ່າຍໄດ້ຮັບຜົນປະໂຫຍດ ແລະ ມີຄວາມສະຫງົບໃນພາກພື້ນດັ່ງກ່າວ; ສປ ຈີນ ຢືນຢັນບໍ່ສະໜັບສະໜູນການຂວ້ຳບາດຝ່າຍດຽວຕໍ່ລັດເຊຍ, ທັງໄດ້ຮຽກຮ້ອງໃຫ້ອາເມຣິກາ ເປີດເຜີຍຫ້ອງປະຕິບັດການຊີວະພາບໃນອູແກຣນ ເພື່ອໃຫ້ຊ່ຽວຊານຈາກຕ່າງປະເທດ ໄດ້ເຂົ້າໄປກວດກາຢ່າງອິດສະຫຼະ ແລະ ວ່າ ຖ້າຫາກ ເມຣິກາ ຕ້ອງການພິສູດຄວາມໂປ່ງໃສຂອງຕົນເອງ ຄວນຊີ້ແຈງໃຫ້ປະຊາຄົມໂລກຮູ້ກ່ຽວກັບກິດຈະການທາງຊີວະພາບດັ່ງກ່າວ ໃຫ້ລະອຽດ ແລະ ມີຄວາມຮັບຜິດຊອບ. ສ່ວນ ອິນເດຍ ສະໜັບສະໜູນທາງການທູດໃຫ້ບັນດາຝ່າຍກ່ຽວຂ້ອງ ປຶກສາຫາລືແກ້ໄຂບັນຫາທີ່ເກີດຂຶ້ນ ດ້ວຍສັນຕິວິທີ ແລະ ຈະຮ່ວມມືດ້ານເສດຖະກິດ-ການຄ້າກັບ ລັດເຊຍ.

ຈາກສະພາບຄວາມເຄັ່ງຕຶງດັ່ງກ່າວ, ອາເມຣິກາ ແລະ ພັນທະມິດ ຍັງສືບຕໍ່ລົງໂທດທາງດ້ານເສດຖະກິດຕໍ່ລັດເຊຍ ດ້ວຍການອາຍັດ ແລະ ຍຶດເອົາຊັບສິນຂອງກຸ່ມຊົນຊັ້ນສູງ ແລະ ບໍລິສັດທີ່ກ່ຽວຂ້ອງກັບການທະຫານຂອງ ລັດເຊຍ ແລະ ໄດ້ປະກາດຈະບໍ່ນຳເຂົ້ານ້ຳມັນ ແລະ ອາຍແກັສທຳມະຊາດຈາກ ລັດເຊຍ ໃນທ້າຍປີ 2022; ສືບຕໍ່ໃຫ້ການຊ່ວຍເຫຼືອແກ່ ອູແກຣນ ເຊັ່ນ IMF ໄດ້ອະນຸມັດແຜນການໜູນຊ່ວຍດ້ານການເງິນສຸກເສີນ 1,4 ຕື້ USD ເພື່ອຊ່ວຍໃນການໃຊ້ຈ່າຍ ແລະ ສ້າງຄວາມດຸ່ນດ່ຽງດ້ານການຊຳລະໜີ້ສິນຂອງອູແກຣນ, ອາເມຣິກາ ໄດ້ໃຫ້ການຊ່ວຍເຫຼືອສຸກເສີນ 13,6 ຕື້ໂດລາສະຫະລັດ ແລະ ອີກ 15,6 ຕື້ໂດລາ ໃຫ້ແກ່ອູແກຣນ ເພື່ອຮັບມືກັບພະຍາດໂຄວິດ-19. ໄຕຫວັນ ໄດ້ປະກາດໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ ອູແກຣນ ເພີ່ມ 11,5 ລ້ານ ໂດລາສະຫະລັດ, ຈາກກ່ອນໜ້ານີ້ ກໍໄດ້ໃຫ້ການຊ່ວຍເຫຼືອໄປແລ້ວ 3,5 ລ້ານໂດລາສະຫະລັດ.

ຂະນະທີ່ ລັດເຊຍ ໄດ້ປະກາດຖອນຕົວ ອອກຈາກການເປັນສະມາຊິກສະພາເອີລົບ ໂດຍກ່າວວ່າ ບັນດາປະເທດຕາເວັນຕົກ ໄດ້ໃຊ້ສະພາເອີລົບ ເປັນເຄື່ອງມືໃນການໂຈມຕີ ລັດເຊຍ ລວມທັງການຂະຫຍາຍສະມາຊິກມາທາງເອີລົບຕາເວັນອອກ. ທາງການລັດເຊຍ ຍັງໄດ້ຕອບໂຕ້ ອາເມລິກາ ແລະ ພັນທະມິດ ໂດຍໄດ້ປະກາດລາຍຊື່ຄົນຕ້ອງຫ້າມເດີນທາງໄປຍັງລັດເຊຍ ເຊິ່ງປະກອບມີ ປະທານາທິບໍດີ ໂຈ ໄບເດັນ, ລັດຖະມົນຕີຕ່າງປະເທດ, ລັດຖະ ມົນຕີປ້ອງກັນປະເທດ ແລະ ເຈົ້າໜ້າທີ່ລະດັບສູງ ຂອງ ອາເມລິກາຈຳນວນໜຶ່ງ, ລວມທັງຜູ້ນຳການາດາ ແລະ ສະມາຊິກສະພາການາດາ ກວ່າ 300 ທ່ານ. ລັດເຊຍ ຍັງໄດ້ສະເໜີຂໍ້ລິເລີ່ມ ແລະ ມາດຕະການຫຼາຍກວ່າ 100 ໂຄງການ ໂດຍຈະໃຊ້ງົບປະມານ 1 ພັນຕື້ ຣຸບ (9 ຕື້ໂດລາສະຫະລັດ) ແລະ ໄດ້ລົງນາມດຳລັດຫ້າມສົ່ງອອກນ້ຳຕານຂາວ, ວັດຖຸດິບນ້ຳຕານ,

ເຂົ້າສາລີ, ເຂົ້າບາເລ ແລະ ສາລີ ໄປຍັງບັນດາປະເທດໃກ້ຄຽງໃນສະມາຄົມເສດຖະກິດ ອາຊີ-ເອີຣົບ. ທ່ານ Sergei Lavrov, ລັດຖະມົນຕ່າງປະເທດລັດເຊຍ ໄດ້ເຕືອນ ປະເທດຕາເວັນຕົກວ່າ ການຂວ້ຳບາດລັດເຊຍ ຂອງ ປະເທດຕາເວັນຕົກ ໄດ້ເຮັດໃຫ້ລັດເຊຍ ແລະ ສປ ຈີນ ເພີ່ມທະວີການພົວພັນກັນແໜ້ນແຟ້ນຍິ່ງຂຶ້ນ, ຈະຮ່ວມມືກັນໃນທຸກຂົງເຂດເສດຖະກິດ ຂອງ ລັດເຊຍ ຈະບໍ່ພັງທະລາຍລົງຍ້ອນການລົງໂທດ ຂອງ ສ.ອາເມລິກາ ແລະ ພັນທະມິດ, ໃນໄລຍະຜ່ານມາ ລັດເຊຍ ສາມາດພັດທະນາຕົນເອງ ເພື່ອທົດແທນການນຳເຂົ້າໃນທຸກຂົງເຂດ ບໍ່ວ່າຈະເປັນວິທະຍາ ສາດ, ເຕັກໂນໂລຊີ, ຢາປົວພະຍາດ ແລະ ຜະລິດຕະພັນຕ່າງໆ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ວັນທີ 14/3/2022, ສະມາຊິກວຸດທິສະພາ ອາເມຣິກາ ຈຳນວນໜຶ່ງ ຈາກພັກ Republican ໄດ້ກ່າວວ່າ ຈະບໍ່ສະໜັບສະໜູນຂໍ້ຕົກລົງສະບັບໃໝ່ລະຫວ່າງ ອີຣານ ແລະ ປະເທດມະຫາອຳນາດ ແລະ ຈະຂັດຂວາງຄວາມພະຍາຍາມໃນການຟື້ນຟູຂໍ້ຕົກລົງ 2015, ເຊິ່ງບໍ່ສາມາດຢຸດຕິການພັດທະນານິວເຄລຍ ຂອງ ອີຣານ. ການເຄື່ອນໄຫວດັ່ງກ່າວມີຂຶ້ນພາຍຫຼັງກອງທັບປະຕິວັດ ອີຣານ (IRGC) ໄດ້ອອກມາສະແດງຄວາມຮັບຜິດຊອບຕໍ່ເຫດການໂຈມຕີທີ່ເມືອງ Erbil ທາງພາກເໜືອ ຂອງ ອີຣັກ, ຊຶ່ງ ອີຣານ ກ່າວວ່າ ເປັນສູນກາງຍຸດທະສາດຂອງອິດສະລາແອນໃນ ອີຣັກ ແລະ ຕອບໂຕ້ກອງກຳລັງອິດສະລາແອນ (IDF) ທີ່ໂຈມຕີທາງອາກາດໃນ ຊີຣີ ເຮັດໃຫ້ເຈົ້າໜ້າທີ່ຂອງກອງກຳລັງ IRGC ເສຍຊີວິດ 2 ຄົນ.

ວັນທີ 18/3/2022, ທ່ານ Bashar al-Assad, ປະທານາທິບໍດີຊີຣີ ໄດ້ພົບປະກັບ ທ່ານ Sheikh Mohammed bin Radhin Al Maktoum, ນາຍົກລັດຖະມົນຕີ ຂອງ ເອມິເຣດ ອາຣັບ ທີ່ ນະຄອນຫຼວງດູໄບ, ເປັນການຢ້ຽມຢາມອາຣັບຄັ້ງທຳອິດ ຂອງ ທ່ານ Assad ນັບຕັ້ງແຕ່ເກີດສົງຄາມ ຊີຣີ ໃນປີ 2011 ເປັນຕົ້ນມາ. ສອງຝ່າຍໄດ້ປຶກສາຫາລືຫລາຍບັນຫາສຳຄັນ ລະຫວ່າງສອງປະເທດ ແລະ ຄວາມສະຫງົບໃນຕາເວັນອອກກາງ, ເຊິ່ງທ່ານນາຍົກ Sheikh Mohammed ກ່າວວ່າ ການຢ້ຽມຢາມຄັ້ງນີ້ ຈະເປັນຜົນດີໃຫ້ແກ່ການພົວພັນ ລະຫວ່າງ ຊີຣີ ແລະ ບັນດາປະເທດໃນຂົງເຂດຕາເວັນອອກກາງ, ຈະນຳຜົນປະໂຫຍດຢ່າງມີສະຖຽນລະພາບໃນ ຊີຣີ ແລະ ມີສັນຕິພາບໃນພາກພື້ນ. ສອງຝ່າຍຍັງໄດ້ເຫັນດີຮ່ວມກັນຍົກລະດັບການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ.

ວັນທີ 21/3/2022, ສ.ອາເມລິກາ ໄດ້ສົ່ງມອບລະບົບປ້ອງກັນຂີປະນາວຸດຈຳນວນຫຼາຍໃຫ້ແກ່ ອາຣັບບີ ຊາອຸດິດ ເພື່ອຕອບສະໜອງຕາມຄຳຮ້ອງຂໍຂອງ ອາຣັບບີ ຊາອຸດິດ ເພື່ອນຳໃຊ້ປ້ອງກັນການໂຈມຕີດ້ວຍລູກສອນໄຟ ແລະ ເຮືອບິນທີ່ບໍ່ມີຄົນຂັບຈາກກຸ່ມ ຮູຕີ ໃນເຢເມນ. ໃນໄລຍະຜ່ານມາ ກຸ່ມ ຮູຕີ ໄດ້ໂຈມຕີດ້ວຍຂີປະນາວຸດ 2 ລູກໃສ່ໂຮງກັ່ນນ້ຳມັນຂະໜາດໃຫຍ່ຂອງ ອາຣັບບີ ຊາອຸດິດ ໃນວັນທີ 20/3/2022 ເຮັດໃຫ້ຕ້ອງໄດ້ຫຼຸດການຜະລິດນ້ຳມັນໃນໂຮງງານດັ່ງກ່າວເປັນການຊົ່ວຄາວ. ອາເມລິກາ ພະຍາຍາມຊຸກຍູ້ໃຫ້ ອາຣັບບີ ຊາອຸດິດ ເພີ່ມການຜະລິດນ້ຳມັນດິບໃຫ້ຫຼາຍຂຶ້ນ ເພື່ອແບ່ງເບົາລາຄານ້ຳມັນແພງ ທີ່ໄດ້ຮັບຜົນກະທົບມາຈາກຄວາມຂັດແຍ່ງໃນ ອູແກຣນ, ແຕ່ມາຮອດປະຈຸບັນ ອາຣັບບີ ຊາອຸດິດ ຍັງປະຕິເສດຄຳຮ້ອງຂໍດັ່ງກ່າວ ແລະ ຕ້ອງປະຕິບັດຕາມຄຳໝັ້ນສັນຍາໃນກອງປະຊຸມ Opec ຊຶ່ງນຳໂດຍ ລັດເຊຍ ແລະ ອາຣັບບີ ຊາອຸດິດ.

ແຫຼ່ງຂ່າວອ້າງອີງ :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, Rodong, The Guardian, CRI, Khmer Times, Aljazeera, RT, Kpl, Lao National Radio, Sputnik, Yonhap, AFP, NHK, Aljazeera, CGTN, Reuters, Nournews.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ພົບປະຜ່ານວິດີໂອທາງໄກ ກັບ ຫົວໜ້າສຳນັກງານຕ່າງປະເທດ ຂອງ ພັກເສລີປະຊາທິປະໄຕຍີ່ປຸ່ນ




ວັນທີ 2 ມີນາ 2022, ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ພົບປະເຮັດວຽກຜ່ານວິດີໂອທາງໄກກັບ ທ່ານ ຄັດຊຸອິ ຮິລາຊະວະ (HIRASAWA Katsuei), ຫົວໜ້າສຳນັກງານຕ່າງປະເທດ ຂອງ ພັກເສລີປະຊາທິປະໄຕຍີ່ປຸ່ນ, ເຊິ່ງ ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕໍ່ການພົບປະຄັ້ງທຳອິດ ທີ່ມີຄວາມໝາຍຄວາມສຳຄັນຂອງສອງຝ່າຍ ແລະ ທັງເປັນໂອກາດອັນດີ ໃນການປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ກ່ຽວກັບການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ພັກ ປປ ລາວ ກັບ ພັກເສລີປະຊາທິປະໄຕຍີ່ປຸ່ນ ແລະ ສາຍພົວພັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສປປ ລາວ-ຍີ່ປຸ່ນ ໃນຕໍ່ໜ້າ. ທ່ານ ທອງສະຫວັນ ພົມວິຫານ ໄດ້ນຳເອົາຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ ຂອງ ພະນະທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ ຝາກໄປຍັງ ພະນະທ່ານ KISHIDA Fumio, ປະທານພັກເສລີປະຊາທິປະໄຕຍີ່ປຸ່ນ; ແຈ້ງຫຍໍ້ ສະພາບການພົ້ນເດັ່ນພາຍໃນພັກ, ພາຍໃນປະເທດ ກໍ່ຄືຜົນສຳເລັດໃນການສ້າງສາພັດທະນາເສດຖະກິດ-ສັງຄົມ, ການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຜົນສຳເລັດໃນດ້ານຕ່າງໆ ທີ່ຍາດມາໄດ້ພາຍໃຕ້ການນຳພາ ຂອງ ພັກ ປປ ລາວ ໃຫ້ຝ່າຍຍີ່ປຸ່ນຊາບ; ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ສອງພັກ, ສອງລັດ ລາວ-ຍີ່ປຸ່ນ ໃນໄລຍະຜ່ານມາ ກໍ່ຄືປັດຈຸບັນ, ສະແດງຄວາມຊົມເຊີຍ ຕໍ່ພັກເສລີປະຊາທິປະໄຕ ກໍ່ຄື ລັດຖະບານຍີ່ປຸ່ນ ທີ່ສາມາດຍາດໄດ້ຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການສ້າງສາ ແລະ ພັດທະນາປະເທດຍີ່ປຸ່ນ ໃຫ້ມີຄວາມເຂັ້ມແຂງ ແລະ ຈະເລີນວັດທະນາ; ສະແດງຄວາມຂອບໃຈຕໍ່ພັກ ແລະ ລັດຖະບານຍີ່ປຸ່ນ ທີ່ໄດ້ໃຫ້ການຊ່ວຍເຫຼືອໃນການຈັດຝຶກອົບຮົມໃຫ້ແກ່ພະນັກງານການນຳຂັ້ນຕ່າງໆຂອງພັກ, ລັດລາວ ໃນໄລຍະຜ່ານມາ ແລະ ຍິນດີຮ່ວມກັບຝ່າຍຍີ່ປຸ່ນ ໃນການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື

ລະຫວ່າງ ສອງພັກ ລາວ-ຍີ່ປຸ່ນ ເພື່ອປະກອບສ່ວນເຂົ້າໃນການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນຄູ່ຮ່ວມຍຸດທະສາດ ລາວ-ຍີ່ປຸ່ນ ໃຫ້ແຕກດອກອອກຜົນ ແລະ ນຳເອົາຜົນປະໂຫຍດຕົວຈິງ ມາສູ່ ປະຊາຊົນສອງຊາດ ໃຫ້ນັບມື້ນັບຫຼາຍຂຶ້ນ.

## 2. ພິທີມອບ - ຮັບໜ້າທີ່ ຄະນະບໍລິຫານງານ ຂອງ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ສະມາຄົມມິດຕະພາບລາວ-ເບລາຣຸດ ລະຫວ່າງ ຊຸດເກົ່າ ແລະ ຊຸດໃໝ່




ວັນທີ 07 ມີນາ 2022, ຢູ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີມອບ - ຮັບໜ້າທີ່ ຄະນະບໍລິຫານງານ ຂອງ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ສະມາຄົມມິດຕະພາບລາວ-ເບລາຣຸດ ລະຫວ່າງ ຊຸດເກົ່າ ແລະ ຊຸດໃໝ່ ໂດຍການໃຫ້ກຽດເຂົ້າຮ່ວມເປັນປະທານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ມີບັນດາສະຫາຍປະທານ, ຮອງປະທານ, ເລຂາທິການ ແລະ ກຳມະການ ຂອງ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ສະມາຄົມມິດຕະພາບ ລາວ-ເບລາຣຸດ ຊຸດເກົ່າ ແລະ ຊຸດໃໝ່ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ຍ້ອງຍໍ-ຊົມເຊີຍ ປະທານ ແລະ ຄະນະບໍລິຫານງານ ຂອງ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ສະມາຄົມມິດຕະພາບ ລາວ-ເບລາຣຸດ ຊຸດເກົ່າ ທີ່ໄດ້ປະກອບສ່ວນສຸມສະຕິປັນຍາ, ເຫື່ອແຮງ ຊີ້ນຳໆພາການເຄື່ອນໄຫວວຽກງານການທູດປະຊາຊົນ ໄປຄຽງຄູ່ກັບການພົວພັນຕ່າງປະເທດດ້ານພັກ ແລະ ການທູດສາຍລັດ ເພື່ອສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືໃນຂົງເຂດດ້ານການສຶກສາ-ກິລາ, ສາທາລະນະສຸກ, ວັດທະນະທຳ-ສັງຄົມ, ການທ່ອງທ່ຽວ, ເສດຖະກິດ-ການຄ້າ, ການລົງທຶນ, ວິທະຍາສາດ-ເຕັກນິກ, ດ້ານມະນຸດສະທຳ, ດ້ານການກຸສົນ ແລະ ໄດ້ຂົນຂວາຍເອົາການຊ່ວຍເຫຼືອຈາກອົງການຈັດຕັ້ງຂອງປະເທດເພື່ອນມິດຈຳນວນຫຼວງຫຼາຍມາຊ່ວຍ ສປປ ລາວ; ສ່ວນຄະນະບໍລິຫານງານ ຂອງ ຄະນະສັນຕິພາບ ແລະ ສາມັກຄີ ຂອງ ລາວ ແລະ ສະມາຄົມມິດຕະພາບ ລາວ-ເບລາຣຸດ ຊຸດໃໝ່ ໃຫ້ສືບຕໍ່ພາລະກິດການພົວພັນລະຫວ່າງ ສປປ ລາວ ກັບຕ່າງປະເທດ ກໍ່ຄືເຄື່ອນໄຫວການທູດປະຊາຊົນ ຊຸກຍູ້ໃຫ້ຕ່າງປະເທດເຂົ້າມາຊ່ວຍເຫຼືອພັດທະນາປະເທດໃຫ້ນັບມື້ນັບຫຼາຍຂຶ້ນ.

### 3. ຄະນະພົວພັນຕ່າງປະເທດສູນກາງພັກ ເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກ - ລັດ






ວັນທີ 15 ມິນາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກ - ລັດ, ໃຫ້ກຽດປາຖະກະຖາໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍ ຄະນະບໍລິຫານງານພັກ, ສະມາຊິກພັກ- ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ ແລະ ຮັບຟັງການເຜີຍແຜ່ ກ່ຽວກັບການ ຫວນຄືນມູນເຊື້ອປະຫວັດສາດ ແລະ ຄວາມໝາຍສຳຄັນຂອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 67 ປີ; ມະຕິກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ XI; ວັນສ້າງຕັ້ງອົງການກວດກາພັກ-ລັດ ສປປ ລາວ ຄົບຮອບ 40 ປີ ແລະ ເອກະສານຜົນສຳເລັດການກໍ່ສ້າງທາງລົດໄຟລາວ - ຈີນ, ເຊິ່ງສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຍົກໃຫ້ເຫັນປະຫວັດສາດແຫ່ງການກຳເນີດເຕີບໃຫຍ່ຂະຫຍາຍຕົວຂອງ ພັກປະຊາຊົນລາວ ໃນເມື່ອກ່ອນ ກໍຄື ພັກປະຊາຊົນ ປະຕິວັດລາວ ໃນປັດຈຸບັນ ແລະ ບັນດາຜົນງານອັນໃຫຍ່ຫຼວງ ໃນການນຳພາ-ຊີ້ນຳ ທີ່ສະຫຼາດສ່ອງໃສຂອງພັກ ໃນຂະບວນການຕໍ່ສູ້ ເພື່ອຍາດເອົາເອກະລາດແຫ່ງຊາດໃນເມື່ອກ່ອນຈົນສາມາດຍາດເອົາໄຊຊະນະຢ່າງສົມບູນ ໃນປີ 1975; ຄວາມສຳຄັນ ຂອງ ມະຕິຂອງສູນກາງພັກ ຄັ້ງທີ 3 ກ່ຽວກັບການຕີລາຄາສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ 9 ເດືອນຜ່ານມາ, ມາດຕະການຈັດຕັ້ງປະຕິບັດແຜນ ໃນໄຕມາດສຸດທ້າຍ ປີ 2021 ແລະ ທິດທາງແຜນການ ປີ 2022, ສະພາບການ ຂອງພາກພື້ນ ແລະ ສາກົນ, ການປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການດຳເນີນຊີວິດການເມືອງພາຍໃນຄະນະບໍລິຫານງານສູນກາງພັກ ປະຈຳປີ 2021, ວຽກງານຈຸດສຸມແຕ່ນີ້ຮອດກອງປະຊຸມຄົບຄະນະ ຄັ້ງທີ 4 ສະໄໝທີ XI; ລະນຶກມູນເຊື້ອວັນສ້າງຕັ້ງອົງການກວດກາພັກ - ລັດ ສປປ ລາວ ຄົບຮອບ 40 ປີ ເຊິ່ງພັກເຮົາຖືວຽກງານກວດກາພາຍໃນພັກ ເປັນພາລະບົດບາດນຳພາທີ່ຂາດບໍ່ໄດ້ ໂດຍຍຶດໝັ້ນຫັດສະນາ ທີ່ວ່າ: ການນຳພາຕ້ອງຕິດພັນກັບການກວດກາ, ຖ້າບໍ່ມີການກວດກາກໍເໝືອນບໍ່ມີການນຳພາ.

## 4. ກອງປະຊຸມສະຫຼຸບວຽກງານການເຄື່ອນໄຫວ ຕ່າງປະເທດ ຂອງບັນດາອົງການຈັດຕັ້ງຂອງພັກ ແລະ ມະຫາຊົນຂັ້ນສູນກາງ ປະຈຳປີ 2021




ວັນທີ 17 ມີນາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມຜ່ານລະບົບວີດີໂອທາງໄກ ເພື່ອສະຫຼຸບການເຄື່ອນໄຫວວຽກງານຕ່າງປະເທດ ຂອງ ບັນດາອົງການພັກຂັ້ນສູນກາງ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ບັນດາສະມາຄົມມິດຕະພາບ ຂອງລາວ ກັບຕ່າງປະເທດ ປະຈຳປີ 2021 ແລະ ວາງທິດທາງແຜນການໃນປີ 2022 ໂດຍການເປັນປະທານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ບັນດາຄະນະນຳ, ຄະນະກົມ ແລະ ພະນັກງານທີ່ກ່ຽວຂ້ອງຈາກ ອົງການຈັດຕັ້ງຕ່າງໆ ເຂົ້າຮ່ວມຈຳນວນ 41 ສະຫາຍ. ສະຫາຍ ສິມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຂຶ້ນຜ່ານບົດສະຫຼຸບສັງລວມກ່ຽວກັບການເຄື່ອນໄຫວວຽກງານການຕ່າງປະເທດຂອງພັກ ແລະ ການທູດປະຊາຊົນ ໃນໄລຍະປີ 2021; ຍົກໃຫ້ເຫັນດ້ານດີ, ດ້ານຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ໃນໄລຍະຜ່ານມາ ແລະ ສະເໜີທິດທາງແຜນການເຄື່ອນໄຫວຕ່າງປະເທດ ປະຈຳປີ 2022 ຂອງບັນດາອົງການຈັດຕັ້ງດັ່ງກ່າວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານ, ຜົນສຳເລັດຂອງການເຄື່ອນໄຫວການຕ່າງປະເທດຂອງພັກ ແລະ ການທູດປະຊາຊົນ ທີ່ຍາດມາໄດ້ໃນໄລຍະຜ່ານມາ ກໍ່ຄືທິດທາງແຜນການເຄື່ອນໄຫວຕ່າງປະເທດໃນຕໍ່ໜ້າ, ໂດຍເນັ້ນເຖິງຄວາມຈຳເປັນໃນການເປີດກວ້າງການພົວພັນກັບຕ່າງປະເທດ, ຍາດແຍ່ງຂົນຂວາຍການຮ່ວມມື, ການສະໜັບສະໜູນ ແລະ ຊ່ວຍເຫຼືອ ສປປ ລາວ. ພ້ອມທັງເປັນການໂຄສະນາແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ໂດຍສະເພາະແມ່ນຜັນຂະຫຍາຍເນື້ອໃນມະຕິ ຂອງ ກອງປະຊຸມໃຫຍ່ສະໄໝ XI ຂອງ ພັກ ເພື່ອປະກອບສ່ວນເຂົ້າໃນການສ້າງສະພາບແວດລ້ອມສາກົນທີ່ອຳນວຍແກ່ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ສືບຕໍ່ຍົກສູງຖານະບົດບາດ ຂອງ ພັກ, ລັດເຮົາໃນເວທີພາກພື້ນ ແລະ ສາກົນ.

## 5. ສະມາຄົມມິດຕະພາບລາວ-ຮົງກາລີ ຈັດພິທີສະຫຼຸບຜົນງານການເຄື່ອນໄຫວແຕ່ປີ 2016-2021




ວັນທີ 11 ມີນາ 2022, ທີ່ພັດທະຄານແມ່ຂອງ ສະມາຄົມມິດຕະພາບລາວ-ຮົງກາລີ ໄດ້ຈັດພິທີສະຫຼູບຜົນງານການເຄື່ອນໄຫວແຕ່ປີ 2016-2021 ແລະ ວາງທິດທາງວຽກງານໃນຊຸມປີຕໍ່ໜ້າ ໂດຍການເປັນປະທານຮ່ວມຂອງ ທ່ານ ປອ ພວງປາຣີສັກ ປຣະວົງວຽງຄໍາ, ປະທານສະມາຄົມຜູ້ເກົ່າ ແລະ ທ່ານ ສີທົງ ຈິດໂຍທິນ, ປະທານສະມາຄົມຜູ້ໃຫມ່, ມີ ທ່ານ ປອ ລາສະໂລ ວາຣໍດີ (Varádi László) ປະທານສະມາຄົມມິດຕະພາບຮົງກາລີ-ລາວ ແລະ ທ່ານ ຕໍກາສ ລາສະໂລ (Takács László), ອຸປະທູດຮົງກາລີ ປະຈໍາ ສປປລາວ ແລະ ຕາງໜ້າພາກສ່ວນກ່ຽວຂ້ອງຂອງຄະນະພົວພັນຕ່າງປະເທດສູນກາງພັກເຂົ້າຮ່ວມ. ທ່ານ ປອ ພວງປາຣີສັກ ປຣະວົງວຽງຄໍາ ປະທານສະມາຄົມຜູ້ເກົ່າ ໄດ້ຂຶ້ນຜ່ານບົດສະຫຼູບຜົນງານການເຄື່ອນໄຫວແຕ່ປີ 2016-2021 ແລະ ວາງທິດທາງວຽກງານໃນຊຸມປີຕໍ່ໜ້າ ໂດຍຍົກໃຫ້ເຫັນເຖິງຄວາມສາມັກຄີເປັນເອກະພາບ ຂອງຄະນະບໍລິຫານງານສະມາຄົມມິດຕະພາບລາວ-ຮົງກາລີ ທີ່ໄດ້ສຸມສະຕິປັນຍາເຫື່ອແຮງ ນໍາພາ-ຊີ້ນໍາ ການເຄື່ອນໄຫວວຽກງານການທູດປະຊາຊົນ ມີຜົນສໍາເລັດຫຼາຍດ້ານ ໂດຍສະເພາະການສ້າງກິດຈະກໍາຕ່າງໆ ເພື່ອສະໜັບສະໜູນ ແລະ ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມື ເປັນຕົ້ນແມ່ນດ້ານການສຶກສາ, ວັດທະນະທໍາ-ສັງຄົມ, ກະສິກໍາ-ປ່າໄມ້, ເສດຖະກິດ-ການຄ້າ, ການລົງທຶນ, ວິທະຍາສາດ-ເຕັກນິກ, ດ້ານການກຸສົນ ແລະ ໄດ້ຍາດແຍ່ງເອົາການຊ່ວຍເຫຼືອຈາກ ປະເທດຮົງກາລີ ຈໍານວນໜຶ່ງມາຊ່ວຍ ສປປ ລາວ ເຊິ່ງ ຄະນະບໍລິຫານງານສະມາຄົມມິດຕະພາບຂອງລາວ-ຮົງກາລີ ຊຸດໃໝ່ ພ້ອມດ້ວຍບັນດາສະມາຊິກ ຈະໄດ້ສືບຕໍ່ປະຕິບັດໜ້າທີ່ສໍາຄັນ ແລະ ມີກຽດນີ້ ເພື່ອນໍາພາການເຄື່ອນໄຫວວຽກງານການທູດປະຊາຊົນຢ່າງຫ້າວຫັນ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ທີ່ພັກ-ລັດ ມອບໝາຍໃຫ້ ເພື່ອປະກອບສ່ວນປົກປັກຮັກສາ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມ ແລະ ການຮ່ວມມື ລະຫວ່າງ ປະຊາຊົນສອງຊາດ ລາວ ກັບ ຮົງກາລີ ໃຫ້ນັບມື້ແໜ້ນແຟ້ນ ແລະ ຈະເລີນງອກງາມ ແນໃສ່ນໍາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາ ສປປ ລາວ.

# III. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ ຄຕພ

## 1. ແມ່ຍິງ ຄຕພ ສະເຫຼີມສະຫຼອງ ວັນສ້າງຕັ້ງແມ່ຍິງສາກົນ




ວັນທີ 3 ມີນາ 2022, ສະຫະພັນແມ່ຍິງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີສະເຫຼີມ ສະຫຼອງ ວັນແມ່ຍິງສາກົນ ທີ 8 ມີນາ ຄົບຮອບ 112 ປີ (8 ມີນາ 1910 – 8 ມີນາ 2022) ພາຍໃຕ້ຄໍາຂວັນ "ຄວາມສະເໝີພາບ ຍິງ-ຊາຍ ໃນມື້ນີ້ ເພື່ອຄວາມຍືນຍົງໃນອານາຄົດ" ພ້ອມທັງມອບໃບຍ້ອງຍໍການເຄື່ອນໄຫວວຽກງານ 3 ດີ ໄລຍະ 5 ປີ (2016-2020) ຂອງໜ່ວຍແມ່ຍິງ ຄຕພ; ໂດຍການເຂົ້າຮ່ວມ ຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກໍາມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ໃນພິທີດັ່ງກ່າວ, ສະຫາຍ ນາງ ສີຣິພອນ ຄູຫາເທບ, ຄະນະບໍລິຫານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງ ຄຕພ ໄດ້ທວນຄືນມູນເຊື້ອປະຫວັດຄວາມເປັນມາ ຂອງວັນແມ່ຍິງສາກົນ ທີ 8 ມີນາ. ຈາກນັ້ນ, ສະຫາຍ ນາງ ພູສີ ວົງແພງຄໍາ, ຮອງປະທານສະຫະພັນແມ່ຍິງ ຄຕພ, ຄະນະຮັບຜິດຊອບວຽກງານ 3 ດີ ກໍ່ໄດ້ຜ່ານບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງ ຄຕພ ໄລຍະ 5 ປີຜ່ານມາ (2016-2020) ແລະ ວາງທິດທາງແຜນການຈຸດສຸມໃນຕໍ່ໜ້າ. ໃນພິທີ ຍັງໄດ້ມອບໃບຍ້ອງຍໍຈາກປະທານສູນກາງສະຫາພັນແມ່ຍິງລາວ ໃຫ້ແກ່ ຄະນະພັກ ຄຕພ ເຊິ່ງເປັນຜູ້ຊີ້ນໍາວຽກງານ 3 ອົງການຈັດຕັ້ງມະຫາຊົນ ຈໍານວນ 1 ໃບ, ໃບຍ້ອງຍໍສະມາຊິກແມ່ຍິງ ຄຕພ ຈໍານວນ 28 ໃບ ແລະ ໃບຊົມເຊີຍບຸກຄົນ 3 ດີ ຈໍານວນ 14 ໃບ. ສະຫາຍ ວາລະໄຊ ເລັ່ງສະຫວັດ ຕາງໜ້າໃຫ້ຄະນະພັກ, ຄະນະນໍາ ຄຕພ ສະແດງຄວາມຊົມເຊີຍການເຄື່ອນໄຫວ ຂອງ ເອື້ອຍນ້ອງແມ່ຍິງ ຄຕພ ທີ່ຄ່ຽງບ່າຄຽງໄຫລ່ກັບເພດຊາຍ, ເຮັດໃຫ້ວຽກງານຂອງ ຄຕພ ມີຜົນສໍາເລັດຫຼາຍດ້ານ; ໃຫ້ສືບຕໍ່ຍົກສູງຄວາມຮັບຜິດຊອບຂອງຕົນ ເພື່ອປະກອບສ່ວນເຂົ້າໃນການ ເຄື່ອນໄຫວຕ່າງປະເທດຂອງພັກໃຫ້ຫຼາຍຂຶ້ນກວ່າເກົ່າ.

2. **ສະຫະພັນກຳມະບານ ຄະນະພົວພັນຕ່າງປະເທດສູນກາງພັກ ສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2021**




ວັນທີ 09 ມີນາ 2022, ສະຫະພັນກຳມະບານ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມ ສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2021, ໂດຍໃຫ້ກຽດເຂົ້າຮ່ວມ ຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ສະຫາຍ ເກີລໍ່ ຢາງກໍ, ກຳມະການຄະນະພັກ, ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ປະທານສະຫະພັນກຳມະບານ ຄຕພ ໄດ້ຜ່ານບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງ ສະຫະພັນກຳມະບານ ຄຕພ, ໄດ້ຍົກໃຫ້ເຫັນຜົນສຳເລັດໃນການເຄື່ອນໄຫວວຽກງານກຳມະບານ ທີ່ພົ້ນເດັ່ນໃນໄລຍະ 1 ປີຜ່ານມາ ໂດຍສະເພາະແມ່ນວຽກງານການປະເມີນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 05 ເປັນເຈົ້າ ຂອງ 06 ກຳມະບານຮາກຖານຢູ່ພາຍໃຕ້ການຄຸ້ມຄອງຂອງສະຫະພັນກຳມະບານ ຄຕພ ຢ່າງຖືກຕາມກົດລະບຽບສູນ ກາງສະຫະພັນກຳມະບານລາວ ສະເລ່ຍໄດ້ 93,18%. ເພື່ອເປັນການຍັ້ງຢືນເຖິງຜົນງານດີເດັ່ນດັ່ງກ່າວ ສະຫາຍ ນິດວິໄລ ເພັດມີໄຊ, ຮອງຫົວໜ້າກົມຂະບວນການແຂ່ງຂັນ ແລະ ຍ້ອງຍໍ ຕາງໜ້າສູນກາງສະຫະພັນກຳມະບານລາວ ໄດ້ ມອບໃບຍັ້ງຢືນ 5 ເປັນເຈົ້າໃຫ້ແກ່ສະຫະພັນກຳມະບານ ຄຕພ ແລະ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າ ຄຕພ ໄດ້ມອບໃບຍັ້ງຢືນ 5 ເປັນເຈົ້າໃຫ້ 06 ກຳມະບານຮາກຖານຂອງ ຄຕພ. ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງ ຫົວໜ້າ ຄຕພ ໄດ້ໂອ້ລົມຕໍ່ກອງປະຊຸມ, ຍ້ອງຍໍ-ຊົມເຊີຍຜົນງານ ຂອງ ສະຫະພັນກຳມະບານ ຄະນະພົວພັນຕ່າງປະເທດ ສູນກາງພັກ ທີ່ໄດ້ສຸມສະຕິປັນຍາ, ເຫື່ອແຮງ ນຳພາ - ຊີ້ນຳ ການເຄື່ອນໄຫວວຽກງານ ຂອງ ສະຫະພັນກຳມະບານ ມີ ຜົນສຳເລັດຫຼາຍດ້ານ ໂດຍສະເພາະການເຄື່ອນໄຫວວຽກງານການມະບານ ແລະ ວິຊາສະເພາະ ເປັນການປະກອບສ່ວນ ອັນສຳຄັນຊ່ວຍຄະນະພັກ ໃນການເຕົ້າໂຮມຄວາມສາມັກຄີ, ປຸກລະດົມ ແລະ ສຶກສາອົບຮົມສະມາ ຊິກກຳມະບານເຂົ້າ ຮ່ວມຂະບວນການຕ່າງໆ, ເປັນຕົວແທນແຫ່ງການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະ ບານກໍ່ຄືພະນັກງານ - ລັດຖະກອນທີ່ສັງກັດຢູ່ ຄະນະພົວພັນຕ່າງປະເທດສູນກາງພັກ ຕະຫຼອດໄລຍະຜ່ານມາ.

## 3. ສາມອົງການຈັດຕັ້ງມະຫາຊົນ ຄຕພ ມອບເຄື່ອງຊ່ວຍເຫຼືອ ໃຫ້ເມືອງເຟືອງ, ແຂວງວຽງຈັນ




ວັນທີ 18 ມີນາ 2022, 03 ອົງການຈັດຕັ້ງມະຫາຊົນ ຄຕພ (ຊາວໜຸ່ມ, ກຳມະບານ ແລະ ແມ່ຍິງ) ໄດ້ໄປມອບເຄື່ອງຊ່ວຍເຫຼືອ ໃຫ້ໂຮງຮຽນປະຖົມສົມບູນ ນາທູນ - ນ້ຳໄຮ ທີ່ບ້ານ ນາທູນ, ເມືອງເຟືອງ, ແຂວງວຽງຈັນ, ນຳພາໂດຍ ທ່ານ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມີພະນັກງານ ຄຕພ ທີ່ຕາງໜ້າໃຫ້ 03 ອົງການຈັດຕັ້ງມະຫາຊົນເຂົ້າຮ່ວມທັງ ໝົດ 26 ທ່ານ. ເຄື່ອງຊ່ວຍເຫຼືອ ທີ່ນຳໄປມອບຄັ້ງນີ້ປະກອບມີ ເຄື່ອງນຸ່ງຮົ່ມ, ອຸປະກອນການສຶກສາ, ອາຫານສຳເລັດຮູບ ແລະ ອຸປະກອນຕ້ານພະຍາດໂຄວິດ - 19 ລວມມູນຄ່າ ປະມານ 22 ລ້ານກີບ.